ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 14 ຫາ 18 ຕຸລາ 2024




ພິທີປະດັບຫຼຽນກາແຮງງານ ໃຫ້ຜູ້ອຳນວຍການ ບໍລິສັດກ້ອນແຮ່ທາດອາຫານເສີມສຳລັບສັດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີປະດັບຫຼຽນກາແຮງງານ ໃຫ້ຜູ້ອຳນວຍການ ບໍລິສັດຜະລິດກ້ອນແຮ່ທາດອາຫານເສີມສຳລັບສັດ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 11 ຕຸລາ 2024 ນີ້ ທີ່ສະໂມສອນ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ມີພິທີປະດັບຫຼຽນ ກາແຮງງານ ໃຫ້ແກ່ Mr Charles OLSSON ຜູ້ ອຳນວຍການ ບໍລິສັດຜະລິດກ້ອນແຮ່ທາດອາຫານ ເສີມສຳລັບສັດ (AgcoTech Ltd-4 Season) ທີ່ ໄດ້ປະກອບສ່ວນ ເຂົ້າໃນວຽກງານການພັດທະນາ ຂະແໜງການກະສິກຳ ແລະ ປ່າໄມ້ 5 ປີ (2015-2019), ບໍລິສັດດັ່ງກ່າວໄດ້ປະກອບສ່ວນເຂົ້າໃນ ວຽກງານພັດທະນາຂະແໜງກະສິກຳ ແລະ ປ່າໄມ້ ຢູ່ 04 ແຂວງ (08 ເມືອງ 32 ບ້ານ) ຂອງ ສປປ ລາວ ຄື: ແຂວງຊຽງຂວາງ, ແຂວງ ສະຫວັນນະ ເຂດ, ແຂວງ ຫຼວງພະບາງ ແລະ ແຂວງ ໄຊຍະບູລີ. ແຕ່ປີ 2015-2019 ບໍລິສັດໄດ້ຮ່ວມລົງທຶນ ຈຳນວນ 720,000 ໂດລາສະຫະລັດ ຮ່ວມກັບໂຄງການ ACIAR (ໂຄງການຂອງລັດຖະບານ ອົດສະຕຣາລີ) ອີກຈຳນວນ 341,000 ໂດລາສະຫະລັດ ລວມທັງໝົດ 1,061,000 ໂດລາສະຫະລັດ, ປີ 2000 ບໍລິສັດຍັງໄດ້ໃຫ້ການຊ່ວຍເຫຼືອ ແລະ ລົງທຶນສ້າງຕັ້ງໂຮງງານກ້ອນແຮ່ທາດອາຫານເສີມໃນມູນຄ່າທັງໝົດ 1,500,000 ໂດລາສະຫະລັດ ແລະ ປະກອບທຶນໝູນວຽກ ຈຳນວນ 2,000,000 ໂດລາສະຫະລັດ ເພື່ອຮັບໃຊ້ວຽກງານຄົ້ນຄວ້າ ທ່າແຮງຂອງກ້ອນແຮ່ທາດອາຫານເສີມ ໃນການຫຼຸດຜ່ອນການລະບາຍທາດມີເທນ (Methane) ແລະ ໃນອະນາຄົດບໍລິສັດ

ຍັງມີແຜນສືບຕໍ່ລົງທຶນປະມານ 15.000.000 ໂດລາສະຫະລັດ ແລະ ຂະຫຍາຍເຄືອຂ່າຍໂຮງງານໃໝ່ທີ່ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ຮອດປີ 2030 ອີກດ້ວຍ.

ດ້ວຍເຫັນໄດ້ເຖິງບົດບາດຄວາມສຳຄັນ ແລະ ສະແດງເຖິງຄວາມຮູ້ບຸນຄຸນໃນການປະກອບສ່ວນເຂົ້າໃນວຽກງານຂອງຂະແໜງການສິກຳ ແລະ ປ່າໄມ້ ໂດຍສະເພາະໃນວຽກງານລ້ຽງສັດ ແລະ ການປະມົງ, ການຊ່ວຍເຫຼືອຂອງລັດຖະບານອົດສະຕຣາລີ ແລະ ບໍລິສັດ ໄດ້ປະກອບສ່ວນຢ່າງຫ້າວຫັນຕໍ່ການພັດທະນາວຽກງານກະສິກຳ ເວົ້າສະເພາະຂະແໜງການລ້ຽງສັດໃຫຍ່ ໃນ ສປປ ລາວ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນງົດງາມລະຫວ່າງ ສປປ ລາວ ແລະ ອົດສະຕຣາລີ ໃນຫຼາຍປີຜ່ານມາ ມີທ່າອ່ຽງຈະເພີ່ມຂຶ້ນ.

ສະນັ້ນ, ຈຶ່ງໄດ້ມີພິທີປະດັບຫຼຽນກາແຮງງານຄັ້ງນີ້ຂຶ້ນ ໂດຍເປັນກຽດປະດັບຫຼຽນກາແຮງງານຄັ້ງນີ້ ຂອງທ່ານ ປອ. ນາງ ຈັນທະຄອນ ບົວລະພັນ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຂົ້າຮ່ວມພິທີໃນຄັ້ງນີ້ ມີຫົວໜ້າ, ຮອງຫົວໜ້າຫ້ອງການ, ກົມ, ແຂກຖືກເຊີນ ພ້ອມດ້ວຍວິຊາການຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;